ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 1806/ກຄສງ

ນະຄອນຫລວງວຽງຈັນ, ວັນທີ 27 NOV 2014

**ແຈ້ງການ**

**ເຖິງ:** ທ່ານ ຜູ້ອຳນວຍການ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ.

**ເລື່ອງ:** ການເພີ່ມທຶນຈົດທະບຽນ ໃຫ້ພຽງພໍຕາມດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 03 ຕຸລາ 2012.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມ ດຳລັດດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 03 ຕຸລາ 2012.

ທະນາຄານແຫ່ງ ສປປ ລາວ, ກົມຄຸ້ມຄອງສະຖາບັນການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ໃຫ້ຈັດຕັ້ງປະຕິບັດຂັ້ນຕອນການເພີ່ມທຶນຈົດທະບຽນ ໃຫ້ຄົບຖ້ວນ ແລະ ພຽງພໍ ຕາມດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 03 ຕຸລາ 2012 ຊຶ່ງມີລາຍລະອຽດ ດັ່ງລຸ່ມນີ້:

1. ໄລຍະເວລາຂອງການເພີ່ມທຶນຈົດທະບຽນ ມີຄື:
   - ໃຫ້ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ເພີ່ມທຶນໃຫ້ສຳເລັດພາຍໃນກຳນົດ 48 ເດືອນ (4 ປີ).
   - ໃຫ້ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ເພີ່ມທຶນໃຫ້ສຳເລັດພາຍໃນໄລຍະເວລາ 12 ເດືອນ (1 ປີ).
2. ວິທີການເພີ່ມທຶນຈົດທະບຽນຂອງ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ສາມາດເພີ່ມໄດ້ດ້ວຍຮູບແບບ ດັ່ງນີ້:
   - ເພີ່ມຈຳນວນຂາຮຸ້ນ ຫຼື ເພີ່ມມູນຄ່າຂອງຮຸ້ນ;
   - ເງິນຈາກຄັງຂະຫຍາຍທຸລະກິດ ຫຼື ກຳໄລສະສົມຂອງສະຖາບັນ;
   - ສະຖາບັນການເງິນອື່ນມາຮ່ວມທຶນນຳ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ**

ທະນາຄານ ແຫ່ງ ສປປ ລາວ ... ກົມຄຸ້ມຄອງສະຖາບັນການເງິນ

ດຣ. ອາຄົມ ປຣະເສີດ


ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**